**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ
ກົມຂົວທາງ

ເລກທີ: 24758 /ກຂທ
ນະຄອນຫຼວງວຽງຈັນ, ວັນທີ: 09 ກັນຍາ 2024.

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

1. ກົມຂົວທາງ ໄດ້ຮັບອະນຸມັດງົບປະມານຈາກກອງທຶນທາງ ເພື່ອນຳໃຊ້ເຂົ້າໃນວຽກຈັດຊື້ຊິງຊັ່ງນໍ້າໜັກແບບເຄື່ອນທີ່ ແລະ ສ້ອມແປງຊິງຊັ່ງນໍ້າໜັກ ປະຈຳປີ 2024. ດັ່ງນັ້ນ, ກົມຂົວທາງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂເໝາະສົມເຂົ້າຮ່ວມການປະມູນ (1) ວຽກຈັດຊື້ຊິງຊັ່ງນໍ້າໜັກແບບເຄື່ອນທີ່ ຈຳນວນ 20 ຊຸດ ແລະ (2) ສ້ອມແປງຊິງຊັ່ງນໍ້າໜັກ ຈຳນວນ 17 ສະຖານີ ຊຶ່ງມີລາຍລະອຽດຄັດຕິດໃນເອກະສານປະມູນ;
2. ການປະມູນຈະດຳເນີນຕາມຮູບແບບ ແລະ ຂັ້ນຕອນການປະມູນເປີດກວ້າງ (ພາຍໃນ) ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
3. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄວາມເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ທີ່ກ່ຽວຂ້ອງຖືກຕ້ອງຕາມກົດໝາຍ ແລະ ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ລຸ່ມນີ້ ໃນໂມງລັດຖະການ: ພະແນກຄຸ້ມຄອງທາງຫຼວງ, ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ, ໂທລະສັບ: 020 55728818; ອີເມລ: silongk@gmail.com;
4. ເອກະສານປະມູນ ສາມາດຊື້ໄດ້ ຢູ່ພະແນກ ແຜນການ, ກົມຂົວທາງ, ເບີໂທລະສັບ: 021 412291; ໂທລະສານ: 021 413249 ຕາມໂມງລັດຖະການ, ໃນລາຄາ 1,500,000 ກີບ/ຊຸດ (ໜຶ່ງລ້ານຫ້າແສນ ກີບຕໍ່ໜຶ່ງຊຸດ) ໂດຍບໍ່ມີການທົດແທນຄືນ;
5. ເອກະສານປະມູນຕ້ອງສົ່ງກ່ອນ ເວລາ 9:00 ໂມງ ຂອງວັນທີ 14 ຕຸລາ 2024 ຢູ່ທີ່ຫ້ອງປະຊຸມ ກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ, ຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;
6. ເອກະສານປະມູນ ຕ້ອງປະກອບໜັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງມູນຄ່າປະມູນ), ໜັງສືຄໍ້າປະກັນການປະມູນ ຕ້ອງໄດ້ຮັບການຢັ້ງຢືນຈາກທະນາຄານ ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
7. ຜູ້ສົນໃຈເຂົ້າຮ່ວມປະມູນສາມາດລົງກວດກາສະໜາມຕົວຈິງດ້ວຍຕົນເອງ ຕາມລາຍລະອຽດຂອງແຕ່ລະສະຖານີ ແລະ ກອງປະຊຸມກ່ອນຍື່ນຊອງປະມູນຈະໄດ້ຈັດຂຶ້ນໃນວັນທີ 01 ຕຸລາ 2024 ຢູ່ທີ່ຫ້ອງປະຊຸມກົມຂົວທາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ນະຄອນຫຼວງວຽງຈັນ ເລີ່ມ ແຕ່ເວລາ 9:00 ໂມງ ເປັນຕົ້ນໄປ.

**ຫົວໜ້າກົມ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມຂົວທາງ

ວັນທອງ ບຸດຕະນະວົງ